ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

1810

ເລກທີ /ຫອຄ.ກທຄວ

ນະຄອນຫລວງວຽງຈັນ, ວັນທີ 26 ສິງຫາ 2019

# ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ, ບັນດາພາກສ່ວນຕ່າງໆ ໃນຂອບເຂດທົ່ວປະເທດ

ເລື່ອງ: ລົບລ້າງແຈ້ງການ, ເລກທີ 1964/ຫອຄ, ລົງວັນທີ 28 ສິງຫາ 2017, ເລື່ອງ: ໂຈະຊົ່ວຄາວກ່ຽວກັບການຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການບໍລິການໃຫ້ຄຳປຶກສາຕ່າງໆ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ46/ສພຊ, ລົງວັນທີ 26 ທັນວາ 2013.
- ອີງຕາມຄຳສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປລາວ ສະບັບເລກທີ 02 /ນຍ, ລົງວັນທີ 01/02/2018.
- ອີງຕາມຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນວິສາຫະກິດ, ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 09 ມັງກອນ 2019.

ເພື່ອປະຕິບັດໃຫ້ສອດຄ່ອງກັບເນື້ອໃນຈິດໃຈ ຂອງຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນວິສາຫະກິດ ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 09 ມັງກອນ 2019, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ລົບລ້າງແຈ້ງການ ສະບັບເລກທີ 1964/ ຫອຄ, ລົງວັນທີ 28 ສິງຫາ 2017 ກ່ຽວກັບການໂຈະຊົ່ວຄາວການຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການບໍລິການໃຫ້ຄຳປຶກສາຕ່າງໆ.
2. ວິສາຫະກິດທີ່ມີຈຸດປະສົງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການບໍລິການໃຫ້ຄຳປຶກສາ ແມ່ນໃຫ້ຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ ພາຍຫລັງຂຶ້ນທະບຽນວິສາຫະກິດແລ້ວ ຈຶ່ງຍື່ນຂໍອະນຸຍາດດຳເນີນທຸລະກິດນຳຂະແໜງການທີ່ກ່ຽວຂ້ອງ ເວັ້ນເສັຍແຕ່ກິດຈະການບໍລິການໃຫ້ຄຳປຶກສາ ຂອງບາງຂະແໜງການ ທີ່ກຳນົດໃຫ້ເປັນກິດຈະການ ທີ່ບໍ່ຈຳເປັນຕ້ອງຂໍອະນຸຍາດດຳເນີນທຸລະກິດ.

ດັ່ງນັ້ນ, ຈຶ່ງແຈ້ງມາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

(ຮອງ) ຫົວໜ້າຫ້ອງການ

ຫ້ອງການ

ນ.ກິ່ງສະດອນ ເພັດດາວເຮືອງ